ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------

ນາຍົກລັດຖະມົນຕີ

ເລກທີ: 18 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 01.06.2016

# ຄຳສັ່ງ

# ວ່າດ້ວຍການກວດກາຄືນລາຄາໄຟຟ້າ ແລະ ແກ້ໄຂຄວາມເດືອດຮ້ອນຂອງ ຜູ້ຊົມໃຊ້ໄຟຟ້າ

ເຖິງ : - ທ່ານ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່

- ຄະນະອຳນວຍການບໍລິສັດໄຟຟ້າລາວ

- ອີງຕາມກົດໝາຍວ່າດ້ວຍລັດຖະບານສະບັບປັບປຸງ ເລກທີ 69/ສພຊ, ລົງວັນທີ 15/12/ 2015;
- ອີງຕາມກົດໝາຍວ່າດ້ວຍໄຟຟ້າສະບັບປັບປຸງ ປີ 2012;
- ອີງຕາມຄວາມຂັດຂ້ອງ ຂອງປະຊາຊົນໃນສັງຄົມ ທີ່ສະເໜີຕໍ່ ລັດຖະບານ.

ເພື່ອເພີ່ມທະວີການກວດກາລາຄາ ແລະ ການຊົມໃຊ້ໄຟຟ້າໃຫ້ຖືກຕ້ອງສອດຄ່ອງກັບຕົວຈິງ, ໃຫ້ຄວາມຍຸຕິທຳແກ່ທຸກຝ່າຍ, ສະກັດກັ້ນປະກົດການຫຍໍ້ທໍ້ ແລະ ຄວາມຜິດພາດ ບໍ່ໃຫ້ເກີດຂຶ້ນໃນສັງຄົມ, ພ້ອມທັງຍົກສູງຄວາມຮັບຜິດຊອບ ຂອງ ພະນັກງານ ໃນການປະຕິບັດໜ້າທີ່ ຢູ່ຂົງເຂດການບໍລິການ ໄຟຟ້າໃຫ້ສູງຂຶ້ນ;

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກຄຳສັ່ງ:

1. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ອະທິບາຍ ແລະ ຢັ້ງຢືນຄືນ ນະໂຍບາຍທີ່ຖືກຕ້ອງເປັນທຳຂອງລັດຖະບານ ກ່ຽວກັບ ການພັດທະນາ ພະລັງງານ ແລະ ການນຳໃຊ້ພະລັງງານ ເພື່ອຮັບໃຊ້ຊີວິດການເປັນຢູ່ ຂອງປະຊາຊົນ ໃນໄລຍະຜ່ານມາ ແລະ ປະຈຸບັນ ເພື່ອໃຫ້ສັງຄົມໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງ;

2. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ກວດກາຄືນ ມາດຖານເຕັກນິກ ແລະ ຊອກຫາສາຍເຫດຕົວຈິງ ທີ່ພາໃຫ້ເກີດມີຄວາມຜິດພາດ ໃນການອອກໃບບິນໄຟຟ້າ ແລະ ຄົ້ນຄວ້າແກ້ໄຂບັນຫາດັ່ງກ່າວໃຫ້ໄວ. ບິນໄຟຟ້າໃດທີ່ບໍ່ຖືກຕ້ອງ ໃຫ້ແກ້ໄຂ ແລະ ສົ່ງເງິນຄືນ ຫຼື ຮັກສາໄວ້ ຊໍາລະຄ່າກະແສ ໃຫ້ຜູ້ຊົມໃຊ້ເດືອນຕໍ່ໄປ;
3. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ຊີ້ນໍາ ບໍລິສັດໄຟຟ້າລາວ ກວດກາຄືນ ການປະຕິບັດໜ້າທີ່ຂອງພະນັກງານທີ່ກ່ຽວຂ້ອງ, ສຶກສາອົບຮົມ ແລະ ປະຕິບັດວິໄນ ຕໍ່ຜູ້ກະທໍາຜິດ ຕາມລະບຽບກົດໝາຍ, ປັບປຸງສັບຊ້ອນພະນັກງານ ໃຫ້ສອດຄ່ອງກັບໜ້າທີ່ຄວາມຮັບຜິດຊອບ ເພື່ອສະກັດກັ້ນ ບໍ່ໃຫ້ປະກົດການຫຍໍ້ທໍ້ເກີດຂຶ້ນອີກ;
4. ໃຫ້ບໍລິສັດໄຟຟ້າລາວ ຕັ້ງສູນຮັບຂໍ້ຂັດຂ້ອງ ແລະ ຂໍ້ຂ້ອງໃຈ ຂອງຜູ້ຊົມໃຊ້ໄຟຟ້າ ແລະ ລົງກວດກາ ແຕ່ລະກໍລະນີ ໃຫ້ລະອຽດ ດ້ວຍຄວາມຮັບຜິດຊອບສູງ ເພື່ອໃຫ້ຄວາມຍຸຕິທໍາ ຕໍ່ຜູ້ຊົມໃຊ້ຢ່າງແທ້ຈິງ;
5. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ຄົ້ນຄວ້າປັບປຸງ ລາຄາໄຟຟ້າຄືນໃໝ່ ໃຫ້ສອດຄ່ອງກັບພື້ນຖານເສດຖະກິດ ແລະ ການພັດທະນາຕົວຈິງ ຂອງປະເທດ, ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ